ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ

ສະບັບທີ 6, ເຫຼັ້ມທີ 1, ມັງກອນ-ມິຖຸນາ 2020, ເລກທະບຽນ ISSN 2521-0653

# ປະເມີນສະຖານະພາບການດໍາເນີນທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນ ນະຄອນ ໄກສອນພົມວິຫານ ແລະ ເມືອງ ອຸທຸມພອນ ແຂວງ ສະຫວັນນະເຂດ[1]

**ມິດຊີ ສີຫາຈັກ*, ຄໍາແກ້ວ ມະນີວົງ ແລະ ຄູນ ສັກບົວວົງ**

*ພາກວິຊາ ບໍລິຫານການຄ້າ, ຄະນະບໍລິຫານທຸລະກິດ ມະຫາວິທະຍາໄລສະຫວັນນະເຂດ*

**ບົດຄັດຫຍໍ້**

ການສຶກສາໃນຄັ້ງນີ້ເພື່ອສຶກສາ ການພັດທະນາ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອເພີ່ມຄວາມສາມາດໃນການດໍາເນີນທຸລະກິດ ແມ່ນມີຄວາມສໍາຄັນ ແລະ ຈໍາເປັນຫຼາຍໃນປະຈຸບັນ ໂດຍລວມການປະກອບທຸລະກິດໃນປະຈຸບັນໃນແຂວງສະຫວັນນະເຂດ ໂດຍສະເພາະຢູ່ໃນເທດສະບານເມືອງ ແມ່ນມີຫຼາຍພໍສົມຄວນ ໂດຍມີວັດຖຸປະສົງຂອງການສຶກສາ (1) ເພື່ອສຶກສາບັນຫາ ຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, (2) ເພື່ອສຶກສາກົນລະຍຸດ ແລະ ແນວທາງການພັດທະນາທຸລະກິດ ຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາແມ່ນ 341 ຫົວໜ່ວຍ, ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນແມ່ນນໍາໃຊ້ແບບສອບຖາມ, ວິເຄາະຂໍ້ມູນໂດຍໂປແກຣມ SPSS ແລະຄ່າສະຖິຕິພື້ນຖານຄື: ຄ່າສະເລ່ຍ, ຄ່າເປີເຊັນ ແລະ ຄ່າຜັນປ່ຽນມາດຕະຖານ.

ຜົນການວິໄຈພົບວ່າ: (1) ຈາກການວິເຄາະຂໍ້ມູນກ່ຽວກັບ ບັນຫາຂອງຜູ້ປະກອບທຸລະກິດທຸລະກິດຂະໜາດກາງ ແລະຂະໜາດນ້ອຍ ແມ່ນບັນຫາທາງດ້ານແຮງງານ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.90; S.D=0.83) ໃນນັ້ນ ບັນຫາດ້ານແຮງງານສ່ວນຫຼາຍເປັນຄົນພາຍໃນຄອບຄົວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ຍ້ອນວ່າ ທຸລະກິດສ່ວນຫຼາຍຈະມີບຸກຄະລາກອນເປັນຄົນໃນຄອບຄົວ ສະນັ້ນຈຶ່ງຍາກຕໍ່ການບໍລິຫານຈັດການ, ບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.88; S.D=0.30) ໃນນັ້ນ ບັນຫາດ້ານສະຖາບັນການເງິນໄດ້ສະໜອງເງິນທຶນຕາມຄວາມຕ້ອງການ ແລະ ວ່ອງໄວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ຂັ້ນຕອນໃນການກູ້ຢືມຍັງມີຂັ້ນຕອນທີ່ຊັບຊ້ອນ ແລະ ມີຫຼາຍຂັ້ນຕອນ, ບັນຫາດ້ານການຕະຫຼາດບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.86; S.D=0.30), ບັນຫາໃນການປະກອບທຸລະກິດ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.85; S.D=0.46) ແລະ ບັນຫາທາງດ້ານການບໍລິຫານຈັດການ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.69; S.D=0.31) ໃນນັ້ນ ການປັບລະບົບການເຮັດວຽກທ່ວງທັນກັບການປ່ຽນແປງຂອງປັດໄຈສະພາບແວດລ້ອມ ແມ່ນຢູ່ໃນລະດັບ ຫຼາຍ ຍ້ອນວ່າ ສະພາບການທາງດ້ານເສດຖະ ກິດ ແລະອັດຕາແລກປ່ຽນທີ່ມີການປ່ຽນແປງໄວ ຈຶ່ງເປັນບັນຫາໃນການບໍລິຫານຈັດການ, (2) ຈາກການວິເຄາະຂໍ້ມູນກ່ຽວກັບກົນລະຍຸດ ແລະ ແນວທາງໃນການພັດທະນາ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ກົນລະຍຸດດ້ານສິນຄ້າ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 4.05; S.D=0.42), ກົນລະຍຸດດ້ານການຈັດຈໍາໜ່າຍ ແມ່ນຢູ່ໃນລະດັບ ຫຼາຍກວ່າໝູ່ ຍ້ອນວ່າ: ຫົວໜ່ວຍທຸລະກິດມີຄວາມຕ້ອງການທີ່ ກະຈາຍສິນຄ້າສູ່ຜູ້ບໍລິໂພກ, ແລະແນວທາງໃນການພັດທະນາທຸລະກິດ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.49; S.D=0.76) ການຫຼຸດພາວະພາສີ - ອາກອນຕໍ່ຜົນການເຕີບໂຕຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແລະການຮ່ວມທຶນ ແມ່ນຢູ່ໃນລະດັບ ຫຼາຍກວ່າໝູ່ ຍ້ອນວ່າ ການຫຼຸດພາສີ-ອາກອນ ຈະເຮັດໃຫ້ທຸລະກິດສາມາດຂະຫຍາຍຕົວໄດ້ເພື່ອຫຼຸດຄ່າໃຊ້ຈ່າຍລົງ.

**ຄໍາສໍາຄັນ:** ການປະກອບທຸລະກິດ, ຂະໜາດນ້ອຍ, ຂະໜາດກາງ, ກົນລະຍຸດ, ແນວທາງການພັດທະນາ

---

[1] ***ການອ້າງອີງພາສາລາວ:*** ມິດຊີ ສີຫາຈັກ, ຄໍາແກ້ວ ມະນີວົງ ແລະ ຄູນ ສັກບົວວົງ .(2020). **ປະເມີນສະຖານະພາບການດໍາເນີນທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນ ນະຄອນໄກສອນພົມວິຫານ ແລະ ເມືອງ ອຸທຸມພອນ ແຂວງ ສະຫວັນນະເຂດ**, *ວາລະສານວິທະຍາສາດ ມະຫາວິທະຍາໄລ ສຸພານຸວົງ, ເລກທະບຽນ ISSN 2521-065, ສະບັບທີ: 6, ເຫຼັ້ມທີ 1, ໜ້າທີ: 225 - 233.*

[1] ***ຕິດຕໍ່ພົວພັນ:*** *ມິດຊີ ສີຫາຈັກ, ພາກວິຊາ ການຄ້າ ຄະນະບໍລິຫານທຸລະກິດ, ມະຫາວິທະຍາໄລສະຫວັນນະເຂດ,*

*Tel: +856 020 22673666, E-mail: mithsysku@gmail.com*

# Assess the status of small and medium enterprises in Kaisonephomvihan and Othoumphone district Savannakhet Province

**Mithsy SYHACHACK[1] , Khamkeo MANIVONG[2] and Khoune SACBOUAVONG[3]**

*Department of Commerce Faculty of Business Administration Savannakhet Province*

**ABSTRACT**

The study was to study the development of small your own medium to enhance the ability to conduct business is important and much needed now by the operators present in the province of Savannakhet in particular in the municipality are very reasonable with the purpose of the study (1) to study the problems of operators of small and medium, (2) to study the strategy and the development of business entrepreneurs and businesses small and medium The sample used in the study was 341 units, the data collection tools were not questionnaires, the data were analyzed by SPSS program and the basic statistical values average, percentage and standard deviation.

Findings: (1) from the analysis of data on the problems of small and medium-sized enterprises, the labor problems are at a high level, with the average and standard deviation equal to ($\bar{X}$= 3.90; S.D = 0.83) most of the labor problem is in the family is not at a higher level because most businesses have personnel in the family, so it is difficult to manage, the problem of lack of capital is at a high level with an average value and standard deviation equal to ($\bar{X}$= 3.88); S.D = 0.30; Most of the labor problem is in the family is not at a higher level because most businesses have personnel in the family, so it is difficult to manage, the problem of lack of capital is at a high level with an average value and standard deviation equal to ($\bar{X}$= 3.88); S.D = 0.30) among them, the problem of financial institutions providing capital on demand and promptness is not at a higher level because the process of borrowing is still complex and there are many steps, the problem of marketing problems, the problem of lack of capital is at a high level with average and standard deviations equal to ($\bar{X}$= 3.86; S.D=0.30), business problems are at a high level with average and standard deviations equal to ($\bar{X}$= 3.85; S.D = 0.46) and management problems are at a high level with average and standard deviations equal to ($\bar{X}$= 3.69; S.D = 0.31). The adjustment of the system to keep pace with changes in environmental factors is not at a high level because the economic situation and the fast-changing exchange rate is a problem in the management. (2) from the analysis of data on strategies and guidelines for the development of small and medium-sized businesses, the product strategy is at a high level, with the average value and standard deviation equal to ($\bar{X}$= 4.05; S.D = 0.42), The management strategy is at a higher level because: business units have a need to distribute products to consumers, and business development pathways are at a higher level, with an average value and standard deviation equal to ($\bar{X}$= 3.49; S.D = 0.76). Reducing taxes on the growth of small and medium-sized businesses and joint ventures is at a much higher level because lowering taxes will enable businesses to grow and reduce costs.

Provide import and export tax reductions to create conditions for small and medium enterprises to grow in order to have liquidity in doing business, encourage entrepreneurs to focus on personnel development, especially in the field of marketing or promotion in the field of marketing. to strengthen the mechanism and network for the promotion of small and medium-sized businesses, to develop the database system for small and medium-sized businesses to be up-to-date, to facilitate investment The multi-step documentation process takes several days, providing training for entrepreneurs, especially to enhance knowledge, skills, experience, such as business planning, production cost calculation and profit margin calculation.

**Keywords:** Enterprises, Small Medium, Strategies, Development Guidelines

[1]Mithsy SYHACHACK , Department of Commerce Email: mithsysku@gmail.com
[2] Khamkeo MANIVONG , Department of Commerce Email: khamkeoftu@gmail.com
3 Khoune SACBOUAVONG, Department of Commerce Email: sackbouavong@yahoo.com

## 1. ພາກສະເໜີ

ເປັນທີ່ຮູ້ກັນແລ້ວວ່າ ແນວທາງໜຶ່ງໃນການພັດທະ ນາເສດຖະກິດຂອງແຕ່ລະປະເທດທີ່ສຳຄັນຄື ການກະຈາຍຄວາມຈະເລີນ ໄປສູ່ພູມມິພາກ ແລະ ພື້ນທີ່ຕ່າງໆ ຂອງປະ ເທດ ເພາະຄວາມຈະເລີນ ກ້າວໄປເຖິງຈຸດນັ້ນ ໝາຍເຖິງຄວາມຈະເລີນເຕີບໂຕທາງດ້ານເສດຖະກິດກໍ່ຈະຂາຍຕົວຕາມກັນໄປ ໂດຍສະເພາະການທີ່ອຸດສາຫະກຳຂະໜາດກາງ ແລະ ຂະໜາດນ້ອຍມີຄວາມສຳຄັນຫຼາຍ ໃນກຸ່ມປະເທດທີ່ກຳລັງພັດທະນາ ເພາະວ່າຊ່ວຍເຮັດໃຫ້ອັດຕາການຈະເລີນເຕີບໂຕທາງດ້ານເສດຖະກິດ ແລະ ອຸດສາຫະ ກຳຂອງປະ ເທດເພີ່ມຂຶ້ນເປັນຢ່າງຍິ່ງ ເຊິ່ງຈະເຫັນໄໄດ້ວ່າອຸດສາຫະກຳຂະໜາດກາງ ແລະ ຂະໜາດນ້ອຍເຫັນວ່າ ຫຼາຍກວ່າ 70 ສ່ວນຮ້ອຍ ຂອງການຂັບເຄື່ອນ ອັດຕາການຈະເລີນເຕີບໂຕທາງດ້ານເສດຖະກິດ ມາຈາກກຸ່ມວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ. (ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ 2016-2020)

ດັ່ງນັ້ນ, ຈະເຫັນໄດ້ວ່າກຸ່ມປະເທດທີ່ກຳລັງພັດທະ ນາຫຼາຍປະເທດໄດ້ມີການປ່ຽນແປງ ຈາກປະເທດກະສິກຳ ໄປສູ່ປະເທດອຸດສາຫະກຳ ເພາະສ່ວນນີ້ກໍ່ໃຫ້ເກີດລາຍໄດ້ ທາງ ພາສີ - ອາກອນ ເພື່ອພັດທະນາຊຸມຊົນ ເນື່ອງຈາກວ່າ ໃນເຂດຊົນນະບົດແມ່ນມີປະຊາກອນທີ່ທຸກຍາກ ແລະ ຢູ່ຮ່າງໄກສອກຫຼີກ ຮ່າງໄກຄວາມຈະເລີນ ເສດຖະກິດ ແລະ ການຄ້າໃນໂລກປັດຈຸບັນ ມີທິດທາງການປ່ຽນແປງໄປຈາກປະເທດກະສິກຳໄປສູ່ປະເທດອຸດສາຫະກຳ ເພາະມັນຈະຊ່ວຍກໍ່ໃຫ້ເກີດລາຍໄດ້ທາງດ້ານການເກັບພາສີອາກອນຫຼາຍຂຶ້ນ ເພື່ອນຳມາພັດທະນາທ້ອງຖິ່ນ ເພື່ອໃຫ້ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກ ໄດ້ຮັບເງິນສະໜັບສະໜູນເພື່ອການດຳລົງຊີວິດ ແລະ ປະກອບອາຊີບຈາກລັດຖະບານ ຊຶ່ງເປັນສ່ວນໜຶ່ງທີ່ຊ່ວຍຊຸກຍູ້ (ຄົມສັນ ລັດຕະນະສິມາກູນ, 2014).

ໂດຍເກີດຂຶ້ນພາຍໃຕ້ພື້ນຖານທັດສະນະຄະຕິ ແລະ ແນວຄວາມຄິດຂອງການພັດທະນາວິສະຫະກິດ ແລະ ອຸດສາຫະກຳຕ່າງແຂວງມາຈາກ 2 ແນວຄິດຄື : ພື້ນທີ່ຕ່າງແຂວງມີລັກສະນະດ້ອຍກວ່າພື້ນທີ່ພັດທະນາແລ້ວເຊັ່ນ: ພື້ນທີ່ໃກ້ຄຽງ ດັງນັ້ນຈຶ່ງຈຳເປັນທີ່ຈະຕ້ອງປັບປຸງ ແລະ ພັດ ທະນາໃນທິດທາງດັ່ງກວ່າເພື່ອໃຫ້ພື້ນທີ່ຕ່າງແຂວງສາມາດແຂ່ງຂັນກັບພື້ນທີ່ອື່ນໆທີ່ພັດທະນາແລ້ວໄດ້ , ແນວຄິດທີ່ອາໄສລັກສະນະພິເສດຂອງແຕ່ລະພື້ນທີ່ໃຫ້ປະໂຫຍດແກ່ການກະຈາຍໂຕຂອງວິສາຫະກິດ ແລະ ອຸດສາຫະກຳເຊັ່ນ: ຊັບພະຍາກອນທຳມະຊາດ, ແຫຼ່ງນ້ຳ ລາຄາດິນ ແລະ ລາ ຄາການຈ້າງງານເປັນຕົ້ນ ຊຶ່ງຈາກພື້ນຖານທັດສະນະຄະຕິ ແລະ ແນວຄວາມຄິດດັ່ງກ່າວນັ້ນເຮັດໃຫ້ການກະຈາຍຕົວຂອງອຸດສາຫະກຳເມື່ອອອກໄປສູ່ພື້ນທີ່ຫ່າງໄກເຮັດໃຫ້ອຸດສາຫະກຳຂະໜາດກາງ ແລະ ຂະໜາດນ້ອຍມີການກະຈາຍຕົວ ແລະ ຈະເລີນເຕີບໂຕຫຼາຍຈົນກາຍເປັນສ່ວນໜຶ່ງຂອງການພັດທະນາທັງທາງດ້ານເສດຖະກິດສັງຄົມ ແລະ ຄວາມກິນດີຢູ່ດີຂອງປະຊາກອນພາຍໃນປະເທດ (ຜົນການສຳຫຼວດຄວາມເຂັ້ມແຂງ ຂອງ SME ລາວ ຢູ່ ແຂວງຫຼວງພະບາງ, ສະຫວັນນະເຂດ ແລະ ຈຳປາສັກ 2018).

ຈາກປະກົດການດັ່ງກວ່າທີ່ວ່າມານີ້ການພັດທະນາ ຂອງວິສາຫະກິດທາງດ້ານການບໍລິຫານການຈັດການເຊິ່ງມີຄວາມເປັນສຳຄັນຫຼາຍ ເຊິ່ງຈະເປັນສ່ວນຊ່ວຍສົ່ງເສີມໃຫ້ວິສາຫະກິດສາມາດດຳເນີນການ ແລະ ປະເຊີນການປ່ຽນແປງພາຍໃຕ້ພາວະການແຂ່ງຂັນຂອງໂລກ ເພື່ອຮອງຮັບການເປີດເສລີທາງການຄ້າ ແລະ ການປ່ຽນແປງໃນປັດຈຸບັນ ແລະ ອານາຄົດ ຊຶ່ງຈະມີຜົນດີຕໍ່ເສດຖະກິດ ແລະ ພູມິພາກຂອງປະເທດ ຊຶ່ງການບໍລິຫານວິສາຫະກິດ ແລະ ອຸດສາຫະກຳໄດ້ປ່ຽນແປງຈາກປະເດັ່ນຂອງອີງກອນກາຍເປັນຄວາມສາ ມາດຫຼັກທີ່ເປັນຫົວໃຈໃນການດຳເນີນການ (Core Competency) ທັງໃນເລື່ອງຂອງຄວາມຕໍ່ເນື່ອງກ່ຽວຂ້ອງກັນຂອງຜູ້ປະຕິບັດການເປັນເຄື່ອງຂ່າຍຕ່າງໆໃນຫ່ວງໂສ້ອຸ ປະທານ ທັງໃນດ້ານການຈັດການວັດສະດຸ ແລະ ດ້ານຂໍ້ມູນ ເທັກໂນໂລຢີທີ່ກ່ຽວຂ້ອງລວມໄປເຖິງການຈັດການທຸລະກິດແບບອີງກອນລວມກຳລັງເປັນສິ່ງທີ່ມີຄວາມສຳຄັນເພີ່ມຂຶ້ນເລື້ອຍໆ ອີງຄວາມຮູ້ຕ່າງໆຫຼາຍປີທີ່ຜ່ານມາເພື່ອນຳມາອ້າງອີງໃຫ້ໄປສູ່ຄວາມສຳເລັດຈຶ່ງບໍ່ທັນຕຳເຫດການໃນການເຮັດວຽກໃນປະຈຸບັນ ດັ່ງນັ້ນການບໍລິຫານ ແລະ ການຈັດການວິສາຫະກິດ ແລະ ອຸດສາຫະກຳຈຶ່ງໄດ້ກາຍເປັນໜຶ່ງໃນເຄື່ອງມືທີ່ມີປະສິດທິພາບຫຼາຍທີ່ສຸດໃນການປັບປຸງພັດທະ ນາທຸລະກິດໃນປັດຈຸບັນນີ້ ຜູ້ຈັດສົ່ງ, ຜູ້ຜະລິດ,ຜູ້ກະຈາຍສິນຄ້າ,ຜູ້ຄ້າປີກ ແລະ ຜູ້ຂາຍບໍລິການຈຳນວນຫຼາຍໜ້ອຍຕ່າງກັນຄົ້ນພົບຈະຕ້ອງເຮັດການປັບປຸງປ່ຽນແປງການດຳເນີນງານຂອງຕົນປ່ຽນແປງການດຳເນີນງານຂອງຕົນ ຖ້າບໍ່ດັ່ງນັ້ນກໍ່ຈະແພ້ຄູ່ແຂ່ງຂັນ ທີ່ມີລະບົບການບໍລິຫານຈັດການທີ່ດີກ

ວ່າດ້ວຍເທັກໂນໂລຢີທີ່ກວ່າໜ້າກວ່າ ແລະ ມີລັກສະນະເປັນເຊີງຮຸ່ນແຮງຫຼາຍກວ່າ ຊຶ່ງການທີ່ວິສາຫະກິດ ແລະ ອຸດສາຫະກຳຈະສາມາດປັບໂຕຈາກສະພາວະການແຂ່ງຂັນໃຫ້ສາມາດແຂ່ງຂັນກັບຕ່າງປະເທດໄດ້ນັ້ນ ການຈັດການທຸລະກິດຈຶ່ງນັບມື້ເປັນປັດໃຈທີ່ສຳຄັນຢ່າງຍິ່ງເພາະການພັດທະນາຄວາມສາມາດຂອງວິສາຫະກິດ ແລະ ອຸດສາຫະກຳເປັນສິ່ງສຳຄັນຢ່າງຍິ່ງຕໍ່ການພັກທະນາປະເທດ ແລະ ເປັນສິ່ງທີ່ປະເທດໄທຈະຕ້ອງຜ້າວດຳເດີນການໃນການພັດ ທະນາວິສາຫະກິດ ແລະ ອຸດສາຫະກຳຂອງປະເທດຈຶ່ງຈຳເປັນຢ່າງຍິ່ງທີ່ຈຳເປັນຕ້ອງມີການຈັດການທີ່ດີ ຊ່ວຍເພີ່ມຜົນຜະລິດທັງເຊີງປະລິມານ ແລະ ເຊີງຄຸນນະພາບສິ່ງຜົນຕໍ່ການຍົກລະດັບການແຂ່ງຂັນຂອງອຸດສາຫະກຳ ຊຶ່ງຈະນຳພາໄປສູ່ຄວາມສະຖຽນລະພາບຂອງອຸດສາຫະກຳຕໍ່ໄປໃນອານາຄົດ (ບົດລາຍງານສະພາບທຸລະກິດໃນພາກພື້ນ 2019)

ໃນປັດຈຸບັນນີ້ ປະເທດລາວເຮົາກໍ່ເປັນປະເທດໜຶ່ງທີ່ເສດຖະກິດກຳລັງພັດທະນາ, ໃນດ້ານການເມືອງດ້ານການປົກຄອງຂອງລາວໄດ້ມີການປັບປຸງ ແລະ ພັດທະນາຂຶ້ນເລື້ອຍໆ, ຕະຫຼອດຮອດດ້ານເສດຖະກິດຂອງລາວເຮົາກໍ່ໄດ້ມີການຂະຫຍາຍຕົວ ແລະ ເປັນປະເທດທີ່ນັກທຸລະກິດຕ່າງປະເທດຕ້ອງການເຂົ້າມາລົງທຶນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ທຸລະກິດຕ່າງໆຂະຫຍາຍຕົວເຊັ່ນວ່າ: ທຸລະກິດການຄ້າ, ການຜະລິດ, ການຄົມມະນາຄົມຂົນສົ່ງ, ຕະຫຼອດຮອດການບໍລິການ ແລະ ອື່ນໆ.

ການພັດທະນາທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ມີຄວາມສຳຄັນ ແລະ ຈຳເປັນຫຼາຍໃນການພັດ ທະນາເສດ-ຖະກິດຂອງ ແຂວງ ສະຫວັນນະເຂດ ຕາມສະພາບການຕົວຈິງການດຳເນີນງານຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍພາຍໃນ ແຂວງສະຫວັນນະເຂດ ໂດຍສະເພາະແມ່ນທຸລະກິດປະເພດທຸລະກິດຄ້າຂາຍ, ການບໍລິການ, ການຜະລິດ ເນື່ອງຈາກວ່າ ຜູ້ດຳເນີນງານບໍ່ໄດ້ມີການວິເຄາະແຜນທຸລະກິດ, ບໍ່ມີການວິເຄາະຕະຫຼາດ, ຕົ້ນທຶນບໍ່ພຽງພໍ, ປັດໄຈການຜະລິດສ່ວນຫຼາຍແມ່ນມີການນຳເຂົ້າເຮັດໃຫ້ຕົ້ນທຶນການຜະລິດສູງ, ທັງທີ່ຄວາມຕ້ອງການສິນຄ້າສູງ. ຕະຫຼາດໃນການຮອງຮັບສິນຄ້າບໍ່ແນ່ນອນ ຈຶ່ງເຮັດໃຫ້ທຸລະກິດດັ່ງກ່າວມີຄວາມສ່ຽງ ຈົນກ້າວໄປສູ່ການປິດກິດຈະການ ບັນຫາດັ່ງກ່າວ ຈຶ່ງເຮັດໃຫ້ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ຂະຫຍາຍຕົວຊ້າທີ່ສຸດ. ເພື່ອເຮັດໃຫ້ທຸລະກິດດັ່ງກ່າວໄດ້ຮັບການປົກປ້ອງ ຂະຫຍາຍຕົວໃຫ້ທ່ວງທັນກັບປະເທດໃກ້ຄຽງຕ້ອງໄດ້ມີການປັບປຸງ ແລະ ແກ້ໄຂ ບັນຫາທີ່ຄົງຄ້າງໂດຍສະເພາະກ່ອນທຸລະກິດໃດໜຶ່ງຈະດຳເນີນກິດຈະການຕ້ອງໄດ້ມີການວາງແຜນ ແລະ ວິເຄາະແຜນທຸລະກິດຢ່າງຊັດເຈນ, ທາງດ້ານຕົ້ນທຶນຕ້ອງໄດ້ມີການສະໜອງໃຫ້ພຽງພໍ ແລະ ອຳນວຍຄວາມສະດວກຕະຫຼາດຮອງຮັບສິນຄ້າຕ້ອງແນ່ນອນ ແລະ ສາມາດກະຈາຍສິນຄ້າໃຫ້ທົ່ວເຖິງ ພຽງພໍກັບຄວາມຕ້ອງການຂອງຜູ້ຊົມໃຊ້ (ຈິດຕາ ເຫຼືອງອ່ອນ, 2009).

**ຈຸດປະສົງ**

- ເພື່ອສຶກສາບັນຫາ ຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.
- ເພື່ອສຶກສາກົນລະຍຸດ ແລະ ແນວທາງການພັດທະນາທຸລະກິດຂອງຜູ້ປະກອບທຸລະກິດຂະໜາດນ້ອຍ

## 2. ວິທີການຄົ້ນຄວ້າ

**ຂອບເຂດຂອງການສຶກສາ**

ສະຖານທີ່ ທີ່ໃຊ້ໃນການເກັບກຳຂໍ້ມູນການສຶກສາໃນຄັ້ງນີ້ຜູ້ວິໄຈໄດ້ສຶກສາເອົາບັນດາຫົວໜ່ວຍທຸລະກິດພາຍໃນເມືອງໄກສອນພົມວິຫານ ແລະ ເມືອງອຸທຸມພອນ ແຂວງສະຫັວນນະເຂດ.

**ໄລຍະເວລາທັງໝົດທີ່ໃຊ້**

ໄລຍະເວລາທີ່ໃຊ້ໃນການສຶກສາຄັ້ງນີ້ຜູ້ສຶກສາໄດ້ໃຊ້ເວລາທັງໝົດ 10 ເດືອນ ຊຶ່ງເລີ່ມແຕ່ວັນທີ 01 ກຸມພາ ຫາ 30 ພະຈິກ 2019.

**ວິທີການດຳເນີນການວິໄຈ**

ສຶກສາໂດຍໃຊ້ວິທີການທາງເສດຖາມິຕິ (Econometric Model) ເພື່ອປະເມີນຜົນກະທົບທາງເສດຖະກິດ, ຜົນກະທົບທາງດ້ານການຕະຫຼາດ, ທາງດ້ານການເງິນ ແລະ ການດຳເນີນງານ ເພື່ອໃຫ້ສາມາດປະເມີນສາເຫດທີ່ເກີດຂຶ້ນ ແລະ ປັບປຸງປັດໄຈທີ່ເປັນສາເຫດທີ່ເປັນຕົວທ່ວງດຶງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍບໍ່ຂະຫຍາຍຕົວຈົນກ້າວໄປເຖິງປິດກິດຈະການ

**ວິທີການເລືອກກຸ່ມຕົວຢ່າງ**

ການເລືອກກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ຜູ້ວິໄຈໄດ້ເລືອກເອົາກຸ່ມຫົວໜ່ວຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍທັງໝົດ ພາຍໃນເມືອງໄກສອນເປັນຫົວໜ່ວຍທຸລະກິດທີ່ໄດ້ຮັບການຂຶ້ນທະບຽນ ແລະ

ມີອາຍຸການດຳເນີນງານນັບແຕ່ 5 ປີຂຶ້ນໄປ ການສອບຖາມ, ການສັງເກດການ, ການສຳຫຼວດພື້ນທີ່

**ວິທີການກຳນົດຂະໜາດກຸ່ມຕົວຢ່າງ**

ການກຳກຸ່ມຕົວຢ່າງແມ່ນຈະໃຊ້ວິທີ ການໃຊ້ການສຸ່ມຕົວຢ່າງແບບງ່າຍ (Simple Random Sampling) ຈາກຈຳນວນທີ່ເປັນຕົວແທນໃຫ້ແກ່ກຸ່ມເປົ້າໝາຍຕົ້ນຕໍ ເຊັ່ນ: ຫົວໜ່ວຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍທີ່ມີຢູ່ພາຍໃນ ຜ່ານການລົງສຳຫຼວດພື້ນທີ່ໆຂອງແຂວງສະຫວັນນະເຂດແມ່ນປະກອບມີ 2,300 ແຫ່ງ. ດັ່ງນັ້ນ ການສຶກສາແມ່ນໄດ້ອີງຕາມສູດຈາກຂະໜາດຂອງປະຊາ ກອນທີ່ມີການຄິດໄລ່ ໂດຍໃຊ້ສູດຂອງທ່ານ Yamanee ດັ່ງນີ້:

$$n = \frac{N}{1+N\,e^2}$$

n = ຂະໜາດຂອງຕົວຢ່າງ.

N = ຈຳນວນຫົວໜ່ວຍທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍທີ່ຂຶ້ນທະບຽນວິສາຫະກິດພາຍໃນແຂວງ ສະຫວັນນະເຂດ

e = ຄວາມຄາດເຄື່ອນຂອງຂະໜາດຕົວຢ່າງເຊິ່ງກຳນົດໃຫ້ຄ່າເທົ່າກັບ 5%.

$$n = \frac{2300}{1+2300(0.05)^2} = 340.75 \approx 341$$

ຈາກການຄິດໄລ່ການກຳນົດຂະໜາດຕົວຢ່າງ ທີ່ສາມາດນຳໃຊ້ເພື່ອປະເມີນຄ່າຂອງປະຊາກອນແມ່ນ 341 ແຫ່ງແລະ ສາມາດກຳນົດຈຳນວນຂອງກຸ່ມຕົວຢ່າງທີ່ຕ້ອງສຳ ພາດໂດຍກຳນົດໃຫ້ 1 ສະບັບແບບສອບຖາມຕໍ່ 1 ແຫ່ງ, ແຕ່ໃນນັ້ນໄດ້ກຳນົດເອົາ 341 ສະບັບເພື່ອເປັນຕົວຢ່າງ.

**ການເກັບກຳລວບລວມຂໍ້ມູນ**

ຂໍ້ມູນປະຖົມພູມ (Primary data) ເປັນຂໍ້ມູນເຊິ່ງລວບລວມຈາກແຫຼ່ງຂໍ້ມູນຕົວຈິງ ມີວິທີການເກັບກຳຂໍ້ມູນເບື້ອງຕົ້ນຈາກແຫຼງຂໍ້ມູນທີ່ເຫັນວ່າກ່ຽວຂ້ອງຂອງການວິໄຈ.

ຂໍ້ມູນທຸຕິຍະພູມ (Secondary data) ເປັນການສຶກສາຄົ້ນຄວ້າເກັບກຳຂໍ້ມູນຈາກໜັງສື, ບົດຄວາມ, ຮູບພາບ, ປຶ້ມຕຳລາ ແລະ ເອກະສານຕ່າງໆລວມທັງບົດວິໄຈທີ່ກ່ຽວຂ້ອງກັບເສດຖະກິດ ແລະ ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ.

**ການວິເຄາະຂໍ້ມູນ**

ວິທີການວິເຄາະຂໍ້ມູນກ່ຽວກັບ ບັນຫາ ແລະ ອຸປະ ສັກຂອງຜູ້ປະກອບທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແລະ ສາເຫດລະຍຸດ ແລະ ແນວທາງການພັດທະນາທຸ ລະກິດຂອງຜູ້ປະກອບທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ໂດຍຈະໃຊ້ການວິເຄາະທາງດ້ອຍສະຖິຕິພັນລະນາ ສ່ວນຂໍ້ມູນຈາກແບບສອບຖາມຈາກຫົວໜ່ວຍທຸລະກິດ ຈະໄດ້ນຳມາວິເຄາະຫາຄ່າຄວາມຖີ່, ຄ່າສະເລ່ຍ, ສ່ວນບ່ຽງເບນ ມາດຕະຖານ ໂດຍໃຊ້ໂປຼແກຼມສຳເລັດຮູບ ເຊິ່ງແບບສອບຖາມແບບເລືອກຕອບວິເຄາະໂດຍການຫາຄ່າຄວາມຖີ່, ເປີເຊັນນຳສະເໜີຮູບແບບຕາຕະລາງປະກອບການບັນລະຍາຍ, ແບບສອບຖາມແບບປະເມີນຄ່າ 5 ລະດັບ ຂອງການວິເຄາະໂດຍການຫາຄ່າສະເລ່ຍ ແລະ ຄ່າບ່ຽງເບນພັນປ່ຽນມາດຕະຖານໂດຍມີເກນການໃຫ້ຄະແນນໂດຍລວມເປັນຫຼັກ ດ້ວຍການໃຫ້ຄະແນນແຕ່ 1 ຫາ 5. ໂດຍມີການຈັດແບ່ງລະດັບການໃຫ້ ຄວາມສຳຄັນດ້ວຍກັນຕາມແບບຂອງ Liker Scale ດັ່ງລາຍລະອຽດລຸ່ມນີ້:

- ➢ ເກນການໃຫ້ຄະແນນ

| | | |
|---|---|---|
| - ຫຼາຍທີ່ສຸດ | ໃຫ້ຄະແນນ | 5 |
| - ຫຼາຍ | ໃຫ້ຄະແນນ | 4 |
| - ປານກາງ | ໃຫ້ຄະແນນ | 3 |
| - ໜ້ອຍ | ໃຫ້ຄະແນນ | 2 |
| - ໜ້ອຍທີ່ສຸດ | ໃຫ້ຄະແນນ | 1 |

ລວມຄະແນນທີ່ໄດ້ຈາກຄຳຕອບທຸກໆຂໍ້ມູນເປັນຄະແນນທີ່ວັດລະດັບແນວຄວາມຄິດເຫັນ ໂດຍມີການແບ່ງລະດັບຄະແນນສະເລ່ຍ (Mean) ໃນການຕີຄວາມໝາຍຂອງຂໍ້ຄວາມຕ່າງໆໂດຍແບ່ງລະດັບປັດໃຈຄວາມສຳຄັນອອກເປັນ 5 ລະດັບດັ່ງນີ້:

ຈາກວິທີການທີ່ໄດ້ກ່າວມາຂ້າງເທິງນັ້ນ ເຮົາສາມາດແບ່ງລະດັບຄວາມສຳຄັນຂອງ ລະດັບຄວາມຄິດເຫັນດ້ວຍຫວ່າງຄະແນນດັ່ງລຸ່ມນີ້:

ເກນການແປຄ່າສະເລ່ຍ

| | |
|---|---|
| 4.21 - 5.00 | ໝາຍເຖິງ ຫຼາຍທີ່ສຸດ. |
| 3.41 – 4.20 | ໝາຍເຖິງ ຫຼາຍ. |
| 2.61 – 3.40 | ໝາຍເຖິງ ປານກາງ. |
| 1.81 – 2.60 | ໝາຍເຖິງ ໜ້ອຍ. |
| 1.0 – 1.80 | ໝາຍເຖິງ ໜ້ອຍທີ່ສຸດ |

**3. ຜົນໄດ້ຮັບ**

ບັນຫາຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງຈາກຜົນຂອງການສຶກສາຈາກ ຕາຕະລາງທີ 11 ສະແດງຂໍ້ມູນ ການສັງລວມບັນຫາ ຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດ ກາງ ແມ່ນຢູ່ໃນລະດັບ ຫຼາຍທີ່ສຸດ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 4.80; S.D=0.54) ບັນຫາທາງດ້ານແຮງງານ ແມ່ນຢູ່ໃນ ລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນ ມາດຕະຖານເທົ່າກັບ ($\bar{X}$= 3.90; S.D=0.25) ໃນ ນັ້ນ ບັນຫາດ້ານແຮງງານສ່ວນຫຼາຍເປັນຄົນພາຍໃນ ຄອບຄົວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ທຸລະກິດສ່ວນຫຼາຍຈະມີບຸກຄະລາກອນເປັນຄົນໃນ ຄອບຄົວ ສະນັ້ນຈຶ່ງຍາກຕໍ່ການບໍລິຫານຈັດການ, ຮອງ ລົງມາແມ່ນ ບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນ ປ່ຽນມາດຕະ ຖານເທົ່າກັບ ($\bar{X}$= 3.88; S.D=0.5) ໃນນັ້ນ ບັນຫາດ້ານສະຖາບັນການເງິນໄດ້ສະໜອງເງິນ ທຶນຕາມຄວາມຕ້ອງການ ແລະ ວ່ອງໄວ ແມ່ນຢູ່ໃນ ລະດັບ ຫຼາຍກວ່າໝູ່ ຍ້ອນວ່າ ຂັ້ນຕອນໃນການກູ້ຢືມ ຍັງມີຂັ້ນຕອນທີ່ຊັບຊ້ອນ ແລະ ມີຫຼາຍຂັ້ນຕອນ, ບັນຫາດ້ານການຕະຫຼາດ ບັນຫາທາງດ້ານການ ຂາດແຄນເງິນທຶນ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າ ສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.86; S.D=0.52), ບັນຫາໃນການປະກອບທຸລະກິດ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນ ປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.85; S.D=0.35) ແລະ ບັນຫາທາງດ້ານການບໍລິຫານຈັດການ ແມ່ນຢູ່ ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນ ມາດຕະຖານເທົ່າກັບ ($\bar{X}$= 3.69; S.D=0.54) ໃນ ນັ້ນ, ການປັບລະບົບການເຮັດວຽກທ່ວງທັນກັບການ ປ່ຽນແປງຂອງປັດໄຈສະພາບແວດລ້ອມ ແມ່ນຢູ່ໃນ ລະດັບ ຫຼາຍ ຍ້ອນວ່າ ສະພາບການທາງດ້ານ ເສດຖະກິດ ແລະ ອັດຕາແລກປ່ຽນທີ່ມີການປ່ຽນແປງ ໄວ ຈຶ່ງເປັນບັນຫາໃນການບໍລິຫານຈັດການ.

ຕາຕະລາງທີ 4.10 ຂໍ້ມູນສັງລວມບັນຫາຜູ້ປະກອບການ

| ສັງລວມບັນຫາຜູ້ປະກອບການ | ຄ່າສະເລ່ຍ ($\bar{X}$) | ຄ່າຜັນປ່ຽນມາດຕະຖານ (S.D) | ລະດັບ ຄວາມສຳຄັນ |
|---|---|---|---|
| ບັນຫາທາງດ້ານແຮງງານ | 3.90 | 0.83 | ຫຼາຍ |
| ບັນຫາທາງດ້ານການຂາດແຄນເງິນທຶນ | 3.88 | 0.30 | ຫຼາຍ |
| ບັນຫາດ້ານການຕະຫຼາດ | 3.86 | 0.30 | ຫຼາຍ |
| ບັນຫາໃນການປະກອບທຸລະກິດ | 3.85 | 0.46 | ຫຼາຍ |
| ບັນຫາທາງດ້ານການບໍລິຫານຈັດການ | 3.69 | 0.31 | ຫຼາຍ |
| **ລວມ** | **4.80** | **0.44** | **ຫຼາຍທີ່ສຸດ** |

ແຫຼ່ງຂໍ້ມູນ: ໄດ້ຈາກການສຳຫຼວດກຸ່ມບໍລິສັດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນນະຄອນໄກສອນ ພົມວິຫານ 01-30 ມິຖຸນາ 2019

**ກົນລະຍຸດ ແລະ ແນວທາງໃນການພັດທະນາ ທຸລະກິດ ຂະໜາດນ້ອຍ ແລະ ຂະໜາດກາງ**

ຈາກຜົນຂອງການສຶກສາຈາກຕາຕະລາງທີ 4.11 ແລະ 4.12 ສະແດງຂໍ້ມູນ ສັງລວມ ກົນລະຍຸດ ແລະ ແນວທາງໃນການພັດທະນາ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າ ກັບ ($\bar{X}$= 3.77; S.D=0.59) ໃນນັ້ນ ກົນລະຍຸດດ້ານ ສິນຄ້າ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 4.05; S.D=0.42) ກົນລະຍຸດດ້ານການຈັດຈຳໜ່າຍ ແມ່ນຢູ່ ໃນລະດັບຫຼາຍ ຍ້ອນວ່າ: ຫົວໜ່ວຍທຸລະກິດມີຄວາມ ຕ້ອງການທີ່ ກະຈາຍສິນຄ້າສູ່ຜູ້ບໍລິໂພກ, ແລະ ແນວ

ທາງໃນການພັດທະນາທຸລະກິດ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.49; S.D=0.76) ການຫຼຸດພາວະພາສີ - ອາກອນຕໍ່ຜົນການເຕີບໂຕຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແລະ ການຮ່ວມທຶນ ແມ່ນຢູ່ໃນລະດັບຫຼາຍ ຍ້ອນວ່າ ການຫຼຸດພາສີ-ອາກອນ ຈະເຮັດໃຫ້ທຸລະກິດສາມາດຂະຫຍາຍຕົວໄດ້ເພື່ອຫຼຸດຄ່າໃຊ້ຈ່າຍລົງ.

ຕາຕະລາງທີ 4.11 ກົນລະຍຸດ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ

| ກົນລະຍຸດດ້ານສິນຄ້າ | ຄ່າສະເລ່ຍ ($\bar{X}$) | S.D | ລະດັບ ຄວາມສຳຄັນ |
|---|---|---|---|
| ກົນລະຍຸດດ້ານລາຄາ ແລະ ສົ່ງເສີມການຂາຍ | 3.55 | 0.04 | ຫຼາຍ |
| ກົນລະຍຸດດ້ານການໂຄສະນາ | 2.78 | 0.01 | ປານກາງ |
| ກົນລະຍຸດດ້ານການຈັດຈຳໜ່າຍ | 3.91 | 0.97 | ຫຼາຍ |
| ພັດທະນາລະບົບຖານຂໍ້ມູນທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ | 3.24 | 0.24 | ປານກາງ |
| ສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກ ແລະ ເຄືອຂ່າຍການສົ່ງເສີມທຸລະກິດ | 2.94 | 0.44 | ປານກາງ |
| ສົ່ງເສີມການສ້າງພັນທະມິດທາງທຸລະກິດ, ການລວມກຸ່ມ ແລະ ການພັດທະນາເຄືອຂ່າຍທຸລະກິດ | 3.46 | 0.93 | ຫຼາຍ |
| ລວມ | 4.05 | 0.44 | ຫຼາຍ |

ແຫຼ່ງຂໍ້ມູນ: ໄດ້ຈາກການສຳຫຼວດກຸ່ມບໍລິສັດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນນະຄອນໄກສອນພົມວິຫານ 01-30 ມິຖຸນາ 2019

ຕາຕະລາງທີ 4.12 ສະແດງເຖິງຂໍ້ມູນແນວທາງໃນການພັດທະນາທຸລະກິດ

| ແນວທາງໃນການພັດທະນາທຸລະກິດ | ຄ່າສະເລ່ຍ ($\bar{X}$) | S.D | ລະດັບ ຄວາມສຳຄັນ |
|---|---|---|---|
| ການກຳນົດນະໂຍບາຍທີ່ບູລະນາການໃສ່ການສົ່ງເສີມການເຕີບໂຕຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ | 3.58 | 0.99 | ຫຼາຍ |
| ການພັດທະນາສະພາບແວດລ້ອມດ້ານຕະຫຼາດທຶນຕະຫຼາດເງິນພາຍໃນປະເທດ | 3.74 | 0.82 | ຫຼາຍ |
| ການຫຼຸດພາວະພາສີ - ອາກອນຕໍ່ຜົນການເຕີບໂຕຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແລະ ການຮ່ວມທຶນ | 4.10 | 0.71 | ຫຼາຍ |
| ການຫຼຸດພາລະຂອງກົດລະບຽບກົດໝາຍທີ່ເປັນອຸປະສັກຕໍ່ການເຕີບໂຕ | 3.96 | 0.83 | ຫຼາຍ |
| ການພັດທະນາຊັບພະຍາກອນມະນຸດໄປສູ່ສັງຄົມແຫ່ງຄວາມຮູ້ ແລະ ສົ່ງເສີມການເຄື່ອນຍ້າຍຂອງແຮງງານຄຸນນະພາບ | 3.97 | 0.99 | ຫຼາຍ |
| ການສົ່ງເສີມການເຂົ້າເຖິງ ແລະ ໃຊ້ປະໂຫຍດຈາກເທັກໂນໂລຊີ ແລະ ການວິໄຈພັດທະນາ | 3.89 | 0.83 | ຫຼາຍ |
| ການພັດທະນາຄວາມຮູ້ | 3.82 | 0.71 | ຫຼາຍ |
| ການບໍລິຫານການຕະຫຼາດ | 3.59 | 0.73 | ຫຼາຍ |
| ລວມ | 3.49 | 0.76 | ຫຼາຍ |

ແຫຼ່ງຂໍ້ມູນ: ໄດ້ຈາກການສຳຫຼວດກຸ່ມບໍລິສັດ ຂະໜາດນ້ອຍ ແລະ ຂະໜາດກາງ ພາຍໃນນະຄອນໄກສອນພົມວິຫານ 01-30 ມິຖຸນາ 2019

## 4. ວິພາກຜົນ

ບັນຫາຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນຢູ່ໃນລະດັບຫຼາຍທີ່ສຸດ ສ່ວນໃຫຍ່ແມ່ນບັນຫາທາງດ້ານແຮງງານ ແມ່ນຢູ່ໃນລະດັບຫຼາຍແຮງງານສ່ວນຫຼາຍເປັນຄົນພາຍໃນຄອບຄົວ ການດຳເນີນທຸລະກິດສ່ວນຫຼາຍແມ່ນນຳໃຊ້ບຸກຄະລາກອນເປັນຄົນໃນຄອບຄົວຊ່ວຍໃນການດຳເນີນກິດຈະການ, ຮອງລົງມາແມ່ນບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໃນນັ້ນ ບັນຫາດ້ານສະຖາບັນການເງິນໄດ້ສະໜອງເງິນທຶນຕາມຄວາມຕ້ອງການ ແລະ ວ່ອງໄວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ຂັ້ນຕອນໃນການກູ້ຢືມຍັງມີຂັ້ນຕອນທີ່ຊັບຊ້ອນ ແລະ ມີຫຼາຍຂັ້ນຕອນ ໄດ້ສອດຄ່ອງກັບບົດຄວາມ ທະນາກອນ ສະແຫວງທອງ (2012) ຜົນກະທົບຈາກການຂະຫຍາຍຕົວຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ.

ບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບຫຼາຍໃນນັ້ນ ບັນຫາດ້ານສະຖາບັນການເງິນໄດ້ສະໜອງເງິນທຶນຕາມຄວາມຕ້ອງການ ແລະ ວ່ອງໄວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ຂັ້ນຕອນໃນການກູ້ຢືມຍັງມີຂັ້ນຕອນທີ່ຊັບຊ້ອນ, ມີຫຼາຍຂັ້ນຕອນ ແລະ ໄລຍະເວລາຂອງການກູ້ຢືມແມ່ນດົນເກີນໄປ ບໍ່ໄດ້ຕາມຄວາມຕ້ອງການ, ອັດຕາດອກເບ້ຍສູງເກີນໄປເຮັດໃຫ້ຜູ້ປະກອບການບໍ່ຕ້ອງການເປັນໜີ້ເພີ່ມ ເຮັດໃຫ້ຜູ້ປະກອບການເກີດມີຄວາມຫຍຸ້ງຍາກ ແລະ ບໍ່ຢາກກູ້ຢືມເງິນຕໍ່ໄປ ເຊິ່ງສອດຄ່ອງກັບບົດວິໄຈຂອງ ຈິດຕາ ເຫຼືອງອ່ອນ (2009) ການສະໜັບສະໜູນດ້ານການເງິນໃຫ້ແກ່ຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ.

## 5. ສະຫຼຸບຜົນ

ບັນຫາຂອງຜູ້ປະກອບທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ແມ່ນຢູ່ໃນລະດັບ ຫຼາຍທີສຸດ ໂດຍມີຄ່າສະ ເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 4.80; S.D=0.44) ບັນຫາທາງດ້ານແຮງງານ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.90; S.D=0.83) ໃນນັ້ນ ບັນຫາດ້ານແຮງງານສ່ວນຫຼາຍເປັນຄົນພາຍໃນຄອບຄົວ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ທຸລະກິດສ່ວນຫຼາຍຈະມີບຸກຄະລາກອນເປັນຄົນໃນຄອບຄົວ, ຮອງລົງມາແມ່ນ ບັນຫາທາງດ້ານການຂາດແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.88; S.D=0.30) ໃນນັ້ນ ບັນຫາດ້ານສະຖາບັນການເງິນໄດ້ສະໜອງເງິນທຶນຕາມຄວາມຕ້ອງການ ແລະ ວ່ອງໄວ ແມ່ນຢູ່ໃນລະດັບ ຫຼາຍກວ່າໝູ່ ຍ້ອນວ່າ ຂັ້ນຕອນໃນການກູ້ຢືມຍັງມີຂັ້ນຕອນທີ່ຊັບຊ້ອນ ແລະ ມີຫຼາຍຂັ້ນຕອນ, ບັນຫາດ້ານການຕະຫຼາດ ບັນຫາທາງດ້ານການຂາດ ແຄນເງິນທຶນ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.86; S.D=0.30), ບັນຫາໃນການປະກອບທຸລະກິດ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.85; S.D=0.46) ແລະ ບັນຫາທາງດ້ານການບໍລິຫານຈັດການ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.69; S.D=0.31) ໃນນັ້ນ ການປັບລະບົບການເຮັດວຽກທ່ວງທັນກັບການປ່ຽນແປງຂອງປັດໄຈສະພາບແວດລ້ອມ ແມ່ນຢູ່ໃນລະດັບ ຫຼາຍ ຍ້ອນວ່າ ສະພາບການທາງດ້ານເສດຖະກິດ ແລະ ອັດຕາແລກປ່ຽນທີ່ມີການປ່ຽນແປງໄວ ຈຶ່ງເປັນຫາໃນການບໍລິຫານຈັດການ.ແນວທາງໃນການພັດທະນາ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ

ກົນລະຍຸດ ແລະ ແນວທາງໃນການພັດທະນາ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.77; S.D=0.59) ໃນນັ້ນ ກົນລະຍຸດດ້ານສິນຄ້າ ແມ່ນຢູ່ໃນລະດັບ ຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 4.05; S.D=0.42) ກົນລະຍຸດດ້ານການຈັດຈຳໜ່າຍ ແມ່ນຢູ່ໃນລະດັບ ຫຼາຍກວ່າໝູ່ ຍ້ອນວ່າ: ຫົວໜ່ວຍທຸກລະກິດມີຄວາມຕ້ອງການທີ່ ກະຈາຍສິນຄ້າສູ່ຜູ້ບໍລິໂພກ, ແລະ ແນວທາງໃນການພັດທະນາທຸລະກິດ ແມ່ນຢູ່ໃນລະດັບຫຼາຍ ໂດຍມີຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ ($\bar{X}$= 3.49; S.D=0.76) ການຫຼຸດພາວະພາສີ - ອາກອນຕໍ່ຜົນການ

ເຕີບໂຕຂອງທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແລະ ການຮ່ວມທຶນ ແມ່ນຢູ່ໃນລະດັບຫຼາຍກວ່າໝູ່ ຍ້ອນວ່າ ການຫຼຸດພາສີ-ອາກອນ ຈະເຮັດໃຫ້ທຸລະກິດສາມາດຂະຫຍາຍຕົວໄດ້ເພື່ອຫຼຸດຄ່າໃຊ້ຈ່າຍລົງ.

**ຂໍ້ສະເໜີແນະ**

- ສະເໜີໃຫ້ມີການຫຼຸດຜ່ອນພາສີ-ອາກອນໃນການນຳເຂົ້າ ແລະ ສົ່ງອອກ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດ ຂະໜາດກາງ ແລະ ຂະໜາດນ້ອຍ ມີການຂະຫຍາຍຕົວ ເພື່ອໃຫ້ເກີດສະພາບຄ່ອງໃນການດຳເນີນທຸລະກິດ.
- ສະເໜີໃຫ້ຜູ້ປະກອບການໃຫ້ຄວາມສຳຄັນໃນການພັດທະນາບຸກຄະລາກອນ ໂດຍສະເພາະແມ່ນການຍົກລະດັບ ໃນສາຂາ ການຕະຫຼາດ ເພື່ອຍົກສູງດ້ານການໂຄສະນາ ຢູ່ພາຍໃນ ຫຼື ຕ່າງປະເທດ ເພື່ອຂະຫຍາຍວິສາຫະກິດ.
- ສະເໜີໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ກົນໄກ ແລະ ເຄືອຂ່າຍການສົ່ງເສີມທຸລະກິດ ຂະໜາດກາງ ແລະ ຂະໜາດນ້ອຍ.
- ສະເໜີໃຫ້ມີການ ພັດທະນາລະບົບຖານຂໍ້ມູນທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ໃຫ້ມີລັກສະທັນສະໄໝໃຫ້ເໝາະສົມກັບຍຸກປະຈຸບັນ.
- ສະເໜີໃຫ້ອຳນວຍຄວາມສະດວກໃນການເຂົ້າຫາແຫຼ່ງທຶນ ເປັນຕົ້ນແມ່ນຫຼັກຄ້ຳປະກັນ, ຫຼຸດອັດຕາດອກເບ້ຍລົງ, ການປະກອບເອກະສານຫຼາຍຂັ້ນຕອນໃຊ້ເວລາຫຼາຍວັນ.
- ສະເໜີໃຫ້ມີການເຝິກອົບຮົມໃຫ້ຜູ້ປະກອບການທຸລະກິດ ໂດຍສະເພາະການຍົກສູງຄວາມຮູ້, ຄວາມສາມາດ, ປະສົບການ, ເປັນຕົ້ນແມ່ນການວາງແຜນທຸລະກິດ, ການຄິດໄລ່ຕົ້ນທຶນການຜະລິດ ແລະ ການຄິດໄລ່ອັດຕາສ່ວນກຳໄລ.
- ຜູ້ປະກອບການທຸລະກິດ ຍັງບໍ່ທັນໄດ້ເອົາໃຈໃສ່ທາງດ້ານຄຸນນະພາບ, ປະລິມານ, ການຫຸ້ມຫໍ່ ແລະ ການໂຄສະນາຜະລິດຕະພັນຂອງຕົນ ການຜະລິດ ແລະ ບໍລິການຍັງມີລັກສະນະຮູບແບບດັ້ງເດີມ, ຂາດການພັດທະນາ.

**6. ເອກະສານອ້າງອີງ**

ພະແນກສົ່ງເສີມອຸດສາຫະກຳ, ສະຖາບັນພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ, ເຄືອຂ່າຍມະຫາວິທະຍາໄລຂອນແກ່ນ (2005)

ຄົມສັນ ລັດຕະນະສິມາກູນ, (2014). ຜູ້ປະກອບການສ່ວນໃຫຍ່ໃຫ້ຄວາມສຳຄັນຕໍ່ສະພາບການດຳເນີນທຸລະກິດ.

ຈິດຕາ ເຫຼືອງອ່ອນ, (2009). ສຶກສາກ່ຽວກັບການສະໜັບສະໜູນດ້ານການເງິນສຳລັບຜູ້ປະກອບການທຸລະກິດຂະ ໜາດກາງ ແລະ ຂະໜາດນ້ອຍ

ທະນາກອນ ສະແຫວງທອງ, (2012) ຄົ້ນຄວ້າຜົນກະທົບຂອງການຂະຫຍາຍຕົວຂອງຮ້ານຂາຍຍ່ອຍທີ່ທັນສະໄໝຮ້ານຂາຍຍ່ອຍສະໄໝເກົ່າ ຢູ່ເຂດກຸງເທບ ມະຫານະຄອນ ແລະ ເຂດໃກ້ຄຽງ.

ທອງວັນ ສີລິວັນ ແລະ ອາຄົມ ໃຈແກ້ວ, (2012). ປັດໃຈທີ່ມີອິດທິພົນຕໍ່ການເຕີບໃຫຍ່ຂອງທຸລະກິດວິສາຫະກິດຂະໜາດນ້ອຍ ແລະ ກາງໃນລາວ

Asian Producitivity Organization APO Productivity Databook .(2010). Tokyo Brunei Darussalam Self Assessment Report Daegu Initiative Assessment On SME Innovation Policies and Best Practices.

Cheong J. (2010). Koreas Economic Cooperation with CLMV Countries: Vietnam Case edited by MitsuhiroKagami BRC Research Report No. 3 Bangkok Research Center IDE-JETRO

Kudo Toshihiro .(2010). Myanmars Border Trade with China: Situation Challenge and Prospects edited by Mitsuhiro Kagami BRC Research Report NO.3 Bangkok Research center IDE-JETRO Bangkok